ຄຳຖາມທີ່ມັກຖາມສຳລັບຊຸດຄຳແນະນຳເລື່ອງລະບຽບວິໄນໃນໂຮງຮຽນ

**A.** ເນື້ອໃນຂອງຊຸດຄຳແນະນຳເລື່ອງລະບຽບວິໄນໃນໂຮງຮຽນ ...... **2**

A.1. ມີຫຍັງແດ່ລວມຢູ່ໃນຊຸດຄຳແນະນຳເລື່ອງລະບຽບວິໄນໃນໂຮງຮຽນຂອງກະຊວງ? ...... 2

A.2. ຈົດໝາຍສະບາຍດີເພື່ອນຮ່ວມງານ ກ່ຽວກັບສິດທິພົນລະເມືອງ ແລະການປະຕິບັດລະບຽບວິໄນໃນໂຮງຮຽນ ເຮັດຫຍັງ? ...... 2

A.3. ຫຼັກການນຳທາງ ແມ່ນຫຍັງ? ...... 3

A.4. ບົດຄັດຫຍໍ້ຂອງກົດເກນ ແລະກົດລະບຽບດ້ານວິໄນໃນໂຮງຮຽນ (ບົດຄັດຫຍໍ້) ປະກອບມີຫຍັງແດ່? ...... 4

**B.** ການໄດ້ຮັບຂໍ້ມູນເພີ່ມເຕີມ ແລະການຊ່ວຍເຫຼືອດ້ານວິຊາການ ...... **4**

B.1. ຂ້ອຍສາມາດເບິ່ງຂໍ້ມູນເພີ່ມເຕີມກ່ຽວກັບບັນຍາກາດໃນໂຮງຮຽນ ແລະລະບຽບວິໄນໃນໂຮງຮຽນໄດ້ຢູ່ໃສ? ...... 4

B.2. ຂ້ອຍສາມາດເບິ່ງຂໍ້ມູນກ່ຽວກັບຊຸດຄຳແນະນຳດ້ານລະບຽບວິໄນໃນໂຮງຮຽນຂອງກະຊວງໃນພາສາອື່ນນອກຈາກພາສາອັງກິດໄດ້ຢູ່ໃສ? ...... 5

B.3. ຂ້ອຍສາມາດຂໍຄວາມຊ່ວຍເຫຼືອໄດ້ແນວໃດ ຖ້າຂ້ອຍຄິດວ່າໂຮງຮຽນໃດໜຶ່ງກຳລັງປະຕິບັດລະບຽບວິໄນໃນແບບທີ່ເລືອກປະຕິບັດ? ...... 5

B.4. ຂ້ອຍແມ່ນຜູ້ໃຫ້ການສຶກສາ ຫຼືຜູ້ບໍລິຫານການສຶກສາ – ຂ້ອຍສາມາດຊອກການຊ່ວຍເຫຼືອດ້ານວິຊາການເພື່ອຊ່ວຍໂຮງຮຽນໃນເຂດການສຶກສາຂອງຂ້ອຍປັບປຸງບັນຍາກາດ ແລະການປະຕິບັດລະບຽບວິໄນໃນໂຮງຮຽນໄດ້ຢູ່ໃສ? ...... 6

B.5. ກະຊວງໃຫ້ການຊ່ວຍເຫຼືອດ້ານການເງິນເພື່ອປັບປຸງບັນຍາກາດ ແລະການປະຕິບັດວິໄນໃນໂຮງຮຽນແມ່ນບໍ? ...... 6

**C.** ຜົນສະທ້ອນສຳລັບສະມາຊິກປະຊາຄົມໂຮງຮຽນ ...... **8**

C.1. ຂ້ອຍແມ່ນຜູ້ໃຫ້ການສຶກສາ – ຊຸດຄຳແນະນຳເລື່ອງລະບຽບວິໄນໃນໂຮງຮຽນໝາຍເຖິງຫຍັງສຳລັບຂ້ອຍ? ...... 8

C.2. ຂ້ອຍແມ່ນນັກຮຽນ ຫຼືພໍ່ແມ່ຂອງນັກຮຽນ – ຊຸດຄຳແນະນຳເລື່ອງລະບຽບວິໄນໃນໂຮງຮຽນໝາຍເຖິງຫຍັງສຳລັບຂ້ອຍ? ...... 8

C.3. ຂ້ອຍແມ່ນຜູ້ບໍລິຫານການສຶກສາ ຫຼືຜູ້ສ້າງນະໂຍບາຍ – ຊຸດຄຳແນະນຳເລື່ອງລະບຽບວິໄນໃນໂຮງຮຽນໝາຍເຖິງຫຍັງສຳລັບຂ້ອຍ? ...... 9

# A. <u>ເນື້ອໃນຂອງຊຸດຄຳແນະນຳເລື່ອງລະບຽບວິໄນໃນໂຮງຮຽນ</u>

## A.1. *ມີຫຍັງແດ່ລວມຢູ່ໃນຊຸດຄຳແນະນຳເລື່ອງລະບຽບວິໄນໃນໂຮງຮຽນຂອງກະຊວງ?*

ຊຸດຄຳແນະນຳເລື່ອງລະບຽບວິໄນໃນໂຮງຮຽນປະກອບມີຫ້າສ່ວນດັ່ງນີ້:

- ອັນທຳອິດ, <u>ຈົດໝາຍສະບາຍດີເພື່ອນຮ່ວມງານ</u>, ຈາກກະຊວງສຶກສາ ແລະກະຊວງຍຸຕິທຳແຫ່ງສະຫະລັດທີ່ໃຫ້ຂໍ້ມູນກ່ຽວກັບວ່າໂຮງຮຽນລັດຖະບານຊັ້ນປະຖົມ ແລະມັດທະຍົມສາມາດຕອບສະໜອງພັນທະທາງກົດໝາຍຂອງເຂົາເຈົ້າໃນການບໍລິຫານລະບຽບວິໄນຂອງນັກຮຽນ ໂດຍບໍ່ມີການເລືອກປະຕິບັດບົນພື້ນຖານເຊື້ອຊາດ, ສີຜິວ ຫຼືຊາດກຳເນີດໄດ້ແນວໃດ.

- ອັນທີສອງ, ເອກະສານ "<u>ຫຼັກການນຳທາງ</u>" ທີ່ອະທິບາຍສາມຫຼັກການຕົ້ນຕໍ ແລະຂັ້ນຕອນການປະຕິບັດທີ່ກ່ຽວຂ້ອງທີ່ສາມາດຊີ້ນຳຄວາມພະຍາຍາມເພື່ອປັບປຸງບັນຍາກາດໃນໂຮງຮຽນ ແລະລະບຽບວິໄນໃນໂຮງຮຽນ.

- ອັນທີສາມ, <u>ປຶ້ມລາຍຊື່ແຫຼ່ງຄວາມຊ່ວຍເຫຼືອເລື່ອງບັນຍາກາດ ແລະລະບຽບວິໄນໃນໂຮງຮຽນຂອງລັດຖະບານກາງ</u> ທີ່ຈັດດັດສະນີຫຼາຍໆແຫຼ່ງຄວາມຊ່ວຍເຫຼືອຂອງລັດຖະບານກາງທີ່ແກ້ໄຂບັນຍາກາດໃນໂຮງຮຽນ ແລະລະບຽບວິໄນໃນໂຮງຮຽນ, ເຊິ່ງລວມທັງສູນຊ່ວຍເຫຼືອດ້ານວິຊາການ, ການສຳມະນາຜ່ານເວັບ ແລະເວັບໄຊທ໌, ການຝຶກອົບຮົມ, ການຄົ້ນຄວ້າວິໄຈ ແລະຄຳແນະນຳຂອງລັດຖະບານກາງ.

- ອັນທີສີ່, ເຄື່ອງມືອອນລາຍທີ່ເອີ້ນວ່າ <u>ບົດຄັດຫຍໍ້ຂອງກົດເກນ ແລະກົດລະບຽບດ້ານວິໄນໃນໂຮງຮຽນ</u> ສຳລັບແຕ່ລະລັດໃນ 50 ລັດ, ເຂດໂຄລຳເບຍ, ແລະເປີໂຕຣິໂກ ທີ່ອະນຸຍາດໃຫ້ຜູ້ໃຊ້ຮຽນຮູ້ເພີ່ມເຕີມກ່ຽວກັບຫຼາກຫຼາຍກົດໝາຍ ແລະກົດລະບຽບໃນທົ່ວທຸກລັດ ແລະເຂດອຳນາດ.

- ສຸດທ້າຍ, <u>ສະພາບລວມກ່ຽວກັບແຜນການລິເລີ່ມດ້ານລະບຽບວິໄນໃນໂຮງຮຽນທີ່ມີການສະໜັບສະໜູນ</u> ທີ່ອະທິບາຍຄວາມພະຍາຍາມຂອງລັດຖະບານກາງທີ່ກຳລັງດຳເນີນຢູ່ ແລະເຮັດສຳເລັດແລ້ວໃນການແກ້ໄຂບັນຫາກ່ຽວກັບບັນຍາກາດໃນໂຮງຮຽນ ແລະລະບຽບວິໄນໃນໂຮງຮຽນ.

## A.2. *<u>ຈົດໝາຍສະບາຍດີເພື່ອນຮ່ວມງານ</u> ກ່ຽວກັບສິດທິພົນລະເມືອງ ແລະການປະຕິບັດລະບຽບວິໄນໃນໂຮງຮຽນ ເຮັດຫຍັງ?*

<u>ຈົດໝາຍສະບາຍດີເພື່ອນຮ່ວມງານ</u> ອະທິບາຍຂໍ້ກຳນົດດ້ານການບໍ່ເລືອກປະຕິບັດພາຍໃຕ້ຫົວບົດ IV ແລະ VI ຂອງກົດໝາຍວ່າດ້ວຍສິດທິພົນລະເມືອງປີ 1964 ແລະແຈ້ງເຕືອນບັນດາໂຮງຮຽນກ່ຽວກັບພັນທະທາງກົດໝາຍຂອງເຂົາເຈົ້າໃນການບໍລິຫານລະບຽບວິໄນຂອງນັກຮຽນໂດຍບໍ່ມີການເລືອກປະຕິບັດບົນພື້ນຖານດ້ານເຊື້ອຊາດ, ສີຜິວ ຫຼືຊາດກຳເນີດ.

ຖ້າບຸກຄົນໃດໜຶ່ງຄິດວ່າໂຮງຮຽນໃດໜຶ່ງກຳລັງລະເມີດພັນທະທາງກົດໝາຍຂອງຕົນ ແລະປະຕິບັດລະບຽບວິໄນໃນແບບທີ່ມີການເລືອກປະຕິບັດບົນພື້ນຖານດ້ານເຊື້ອຊາດ, ສີຜິວ, ຊາດກຳເນີດ ຫຼືພື້ນຖານອື່ນ (ເຊັ່ນວ່າ ເພດ, ອາຍຸ ຫຼືສະຖານະຄວາມພິການ), ບຸກຄົນນັ້ນສາມາດຍື່ນການຮ້ອງຮຽນນຳຫ້ອງການສິດທິພົນລະເມືອງ (OCR) ຂອງກະຊວງສຶກສາ ຫຼື ພະແນກສິດທິພົນລະເມືອງ (CRT) ຂອງກະຊວງຍຸຕິທຳ (DOJ) ໄດ້ (ເບິ່ງຂໍ້ B.3. ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບການຍື່ນການຮ້ອງຮຽນນຳ OCR ຫຼື CRT). ແມ້ກະທັ້ງວ່າບໍ່ມີການຮ້ອງຮຽນລາຍບຸກຄົນ, ບາງຄັ້ງ OCR ຍັງລິເລີ່ມການສືບສວນຂອງຕົນເອງ ຫຼື "ການທົບທວນການປະຕິບັດຕາມ" ຂອງນະໂຍບາຍ ແລະວິທີປະຕິບັດລະບຽບວິໄນຂອງໂຮງຮຽນໃດໜຶ່ງ.

<u>ຈົດໝາຍສະບາຍດີເພື່ອນຮ່ວມງານ</u> ອະທິບາຍສິ່ງທີ່ OCR ຈະເຮັດ ເມື່ອໄດ້ຮັບການຮ້ອງຮຽນ ຫຼືເລີ່ມການທົບທວນການປະຕິບັດຕາມທີ່ກ່ຽວຂ້ອງກັບການເລືອກປະຕິບັດໃນການບໍລິຫານລະບຽບວິໄນຂອງນັກຮຽນ, ແລະອະທິບາຍກອບກົດໝາຍ ແລະວິທີການທີ່ OCR ຈະປະຕິບັດຕາມໃນການສືບສວນຂອງມັນ. ໃນບ່ອນທີ່ພົບການລະເມີດ, <u>ຈົດໝາຍສະບາຍດີເພື່ອນຮ່ວມງານ</u> ໃຫ້ຕົວຢ່າງກ່ຽວກັບປະເພດການແກ້ໄຂທີ່ອາດຈະຖືກໃຊ້ເພື່ອໃຫ້ການບັນເທົາທຸກແກ່ນັກຮຽນລາຍບຸກຄົນ ຫຼືເພື່ອຮັບປະກັນບໍ່ໃຫ້ໂຮງຮຽນສືບຕໍ່ລະເມີດຂໍ້ກຳນົດຂອງຫົວບົດ VI ອີກໃນອະນາຄົດ.

<u>ຈົດໝາຍສະບາຍດີເພື່ອນຮ່ວມງານ</u> ສົ່ງເສີມໃຫ້ເຂດການສຶກສາປະເມີນນະໂຍບາຍ, ວິທີປະຕິບັດ ແລະຂັ້ນຕອນດ້ານລະບຽບວິໄນຂອງເຂົາເຈົ້າ ເພື່ອຮັບປະກັນວ່າພວກມັນຍຸຕິທຳ ແລະນຳໃຊ້ຢ່າງເທົ່າທຽມກັນຕໍ່ກັບນັກຮຽນທຸກຄົນ. ໃນບ່ອນທີ່ເຂດການສຶກພົບເຫັນສາເຫດຂອງບັນຫາ, ພາກຄັດຕິດຂອງ <u>ຈົດໝາຍສະບາຍດີເພື່ອນຮ່ວມງານ</u> ໃຫ້ຄຳສະເໜີແນະເພື່ອຊ່ວຍພວກເຂົາໃນການບໍລິຫານລະບຽບວິໄນຂອງນັກຮຽນຢ່າງຍຸຕິທຳ ແລະເທົ່າທຽມກັນ.

## A.3. *<u>ຫຼັກການນຳທາງ</u> ແມ່ນຫຍັງ?*

*<u>ຫຼັກການນຳທາງ</u>* ບໍ່ໄດ້ກຳນົດຂໍ້ກຳນົດທາງກົດໝາຍໃດໆ ຫຼືຮຽກຮ້ອງໃຫ້ລັດ, ເຂດການສຶກສາ ຫຼືໂຮງຮຽນເຮັດການດຳເນີນການ. ກົງກັນຂ້າມ, *<u>ຫຼັກການນຳທາງ</u>* ລະບຸບູລິມະສິດສາມຢ່າງເພື່ອໃຫ້ຜູ້ສ້າງນະໂຍບາຍ, ເຈົ້າໜ້າທີ່ເຂດການສຶກສາ, ຫົວໜ້າໂຮງຮຽນ ແລະພາກສ່ວນທີ່ກ່ຽວຂ້ອງ ພິຈາລະນາ ເພາະວ່າພວກມັນຊ່ວຍປັບປຸງບັນຍາກາດ ແລະລະບຽບວິໄນໃນໂຮງຮຽນ. ບູລິມະສິດຕໍ່ໄປນີ້ສະທ້ອນເຖິງປະສົບການຂອງພວກເຮົາໃນການເຮັດວຽກກັບໂຮງຮຽນທີ່ປອດໄພແລະໃຫ້ການສະໜັບສະໜູນໃນທົ່ວປະເທດ, ການທົບທວນການຄົ້ນຄວ້າວິໄຈ, ແລະການປຶກສາຫາລືກັບພາກສະໜາມ:

- ສ້າງບັນຍາກາດທີ່ດີ ແລະການສຸມໃສ່ການປ້ອງກັນ;
- ພັດທະນາຄາດໝາຍ ແລະຜົນຮັບທີ່ຈະແຈ້ງ, ເໝາະສົມ ແລະກົງກັນ ເພື່ອແກ້ໄຂພຶດຕິກຳຂອງນັກຮຽນທີ່ບໍ່ຟັງຄວາມ; ແລະ
- ຮັບປະກັນຄວາມຍຸຕິທຳ, ຄວາມສະເໝີພາບ ແລະການປັບປຸງຢ່າງຕໍ່ເນື່ອງ.

ຫຼັກການນຳທາງ ຍັງລະບຸຂັ້ນຕອນດຳເນີນການ ແລະການຄົ້ນຄວ້າ ແລະ ແຫຼ່ງຄວາມຊ່ວຍເຫຼືອທີ່ກ່ຽວຂ້ອງສຳລັບແຕ່ລະຫຼັກການນຳທາງ. ແຫຼ່ງຄວາມຊ່ວຍເຫຼືອເພີ່ມເຕີມທີ່ສາມາດຊ່ວຍໃນເລື່ອງການຈັດຕັ້ງປະຕິບັດ ຫຼັກການນຳທາງ ສາມາດເບິ່ງໄດ້ໃນ ປື້ມລາຍຊື່ແຫຼ່ງຄວາມຊ່ວຍເຫຼືອດ້ານບັນຍາກາດ ແລະລະບຽບວິໄນໃນໂຮງຮຽນຂອງລັດຖະບານກາງ (ປື້ມລາຍຊື່).

### A.4. *ບົດຄັດຫຍໍ້ຂອງກົດເກນ ແລະກົດລະບຽບດ້ານວິໄນໃນໂຮງຮຽນ (ບົດຄັດຫຍໍ້) ປະກອບມີຫຍັງແດ່?*

ບົດຄັດຫຍໍ້ ຖືກອອກແບບມາເພື່ອຊ່ວຍໃຫ້ຜູ້ສ້າງນະໂຍບາຍຂັ້ນລັດ ແລະທ້ອງຖິ່ນ ເຊັ່ນດຽວກັບພະນັກງານລະດັບໂຮງຮຽນ, ນັກຮຽນ, ຄອບຄົວ ແລະຜູ້ສະໜັບສະໜູນ ເຂົ້າໃຈໄດ້ດີກວ່າກ່ຽວກັບບົດບັນຍັດດ້ານກົດໝາຍ ແລະນະໂຍບາຍທີ່ກ່ຽວຂ້ອງກັບການປະຕິບັດວິໄນໃນໂຮງຮຽນໃນປະເທດຂອງພວກເຮົາ. ມັນໃຫ້ຂໍ້ມູນກ່ຽວກັບກົດເກນດ້ານວິໄນໃນໂຮງຮຽນ ແລະກົດລະບຽບດ້ານການບໍລິຫານສຳລັບແຕ່ລະລັດໃນ 50 ລັດ, ເຂດໂຄລຳເບຍ ແລະເປີໂຕຣິໂກ ເຊິ່ງມີຜົນນຳໃຊ້ມາຮອດມາເດືອນພຶດສະພາ 2013.

ສຳລັບແຕ່ລະເຂດອຳນາດ, ບົດຄັດຫຍໍ້ ໃຫ້ຂໍ້ບັງຄັບ, ກົດລະບຽບຂັ້ນລັດ, ແລະ (ຖ້າມີໃຫ້) ເວັບໄຊທ໌ ແລະແຫຼ່ງຄວາມຊ່ວຍເຫຼືອທີ່ສະໜັບສະໜູນໂດຍລັດ. ນອກນັ້ນ, ກົດເກນ ແລະກົດລະບຽບດ້ານວິໄນທີ່ເກັບກຳສຳລັບແຕ່ລະເຂດອຳນາດໄດ້ຖືກຈັດເປັນໝວດໝູ່ຕາມປະເພດຂອງບັນຫາວິໄນສະເພາະທີ່ພວກມັນເວົ້າເຖິງ ເພື່ອໃຫ້ຜູ້ໃຫ້ສາມາດປຽບທຽບກົດເກນ ແລະກົດລະບຽບໃນທຸກເຂດອຳນາດ.

## B. ການໄດ້ຮັບຂໍ້ມູນເພີ່ມເຕີມ ແລະການຊ່ວຍເຫຼືອດ້ານວິຊາການ

### B.1. *ຂ້ອຍສາມາດເບິ່ງຂໍ້ມູນເພີ່ມເຕີມກ່ຽວກັບບັນຍາກາດໃນໂຮງຮຽນ ແລະລະບຽບວິໄນໃນໂຮງຮຽນໄດ້ຢູ່ໃສ?*

ທຸກຂໍ້ມູນທີ່ກ່ຽວຂ້ອງກັບຊຸດຄຳແນະນຳດ້ານວິໄນໃນໂຮງຮຽນສາມາດເບິ່ງຢູ່ເວັບໄຊທ໌ຂອງກະຊວງໄດ້ທີ່ www.ed.gov/school-discipline.

ນອກນັ້ນ, ກະຊວງຍັງໃຫ້ທຶນແກ່ສູນຊ່ວຍເຫຼືອດ້ານວິຊາການສອງແຫ່ງ ເພື່ອໃຫ້ຂໍ້ມູນແກ່ສາທາລະນະກ່ຽວກັບວິທີປັບປຸງບັນຍາກາດ ແລະການປະຕິບັດວິໄນໃນໂຮງຮຽນ. ອັນທຳອິດ, ສູນແຫ່ງຊາດສຳລັບສະພາບແວດລ້ອມການຮຽນຮູ້ແບບມີການສະໜັບສະໜູນຢ່າງປອດໄພ (NCSSLE) ຊ່ວຍໃຫ້ໂຮງຮຽນ, ເຂດການສຶກສາ ແລະລັດ ປັບປຸງສະພາບເງື່ອນໄຂສຳລັບການຮຽນຮູ້ໃນຫຼາກຫຼາຍສະຖານທີ່ – ຜ່ານການຈັດຕັ້ງປະຕິບັດໂຄງການທີ່ມີປະສິດທິຜົນ ແລະການວັດແທກບັນຍາກາດໃນໂຮງຮຽນ – ເພື່ອໃຫ້ນັກຮຽນທຸກຄົນມີໂອກາດບັນລຸໄດ້ຜົນສຳເລັດດ້ານການຮຽນໃນສະພາບແວດລ້ອມທີ່ມີປອດໄພ ແລະມີການສະໜັບສະໜູນ. ອັນທີສອງ, ສູນຊ່ວຍເຫຼືອດ້ານວິຊາການກ່ຽວກັບການແຊກແຊງ ແລະການສະໜັບສະໜັບດ້ານພຶດຕິກຳທີ່ດີ ໃຫ້ຂໍ້ມູນດ້ານການສ້າງຄວາມອາດສາມາດ ແລະການຊ່ວຍເຫຼືອດ້ານວິຊາການແກ່ໂຮງຮຽນ,

ເຂດການສຶກສາ ແລະລັດ ເພື່ອກຳນົດ, ຈັດຕັ້ງປະຕິບັດ, ດັດປັບ ແລະຮັກສາກອບວຽກສຳລັບການປະຕິບັດດ້ານພຶດຕິກຳໃນທົ່ວໂຮງຮຽນຢ່າງມີປະສິດທິຜົນ.

ສຸດທ້າຍ, ບຸກຄົນທີ່ສົນໃຈສາມາດສົ່ງຄຳຖາມ ແລະຄຳຄິດເຫັນຫາ schooldiscipline@ed.gov ເພື່ອໄດ້ຮັບຄວາມຊ່ວຍເຫຼືອຈາກພະນັກງານຂອງກະຊວງ.

## B.2. *ຂ້ອຍສາມາດເບິ່ງຂໍ້ມູນກ່ຽວກັບຊຸດຄຳແນະນຳດ້ານລະບຽບວິໄນໃນໂຮງຮຽນຂອງກະຊວງໃນພາສາອື່ນນອກຈາກພາສາອັງກິດໄດ້ຢູ່ໃສ?*

ທ່ານສາມາດຮ້ອງຂໍເອົາການບໍລິການຊ່ວຍເຫຼືອດ້ານພາສາສຳລັບຂໍ້ມູນເພີ່ມເຕີມເທິງທຸກເອກະສານທີ່ມີໃຫ້ແກ່ສາທາລະນະໃນຊຸດຄຳແນະນຳເລື່ອງລະບຽບວິໄນໃນໂຮງຮຽນຂອງກະຊວງ. ການບໍລິການຊ່ວຍເຫຼືອດ້ານພາສາເຫຼົ່ານີ້ມີໃຫ້ໂດຍບໍ່ເສຍຄ່າ. ຖ້າທ່ານຕ້ອງການຂໍ້ມູນເພີ່ມເຕີມກ່ຽວກັບການບໍລິການຊ່ວຍເຫຼືອດ້ານພາສາ, ກະລຸນາໂທຫາ 1-800-USA-LEARN (1-800-872-5327) (ກົດຕົວເລືອກ 3 ສຳລັບການຊ່ວຍເຫຼືອໃນພາສາໃດໜຶ່ງກໍ່ຕາມ, ລວມທັງ español, 中文: 繁體版, Việt-ngữ, 한국어, ຕາກາລັອກ, ແລະ Русский), ຫຼື 1-800 877-8339 (TTY / ASCII). ນອກນັ້ນ ທ່ານຍັງສາມາດອີເມວຫາພວກເຮົາໄດ້ທີ່ Ed.Language.Assistance@ed.gov ຫຼືຂຽນຫາ: U.S. Department of Education Information Resource Center, LBJ Education Building, 400 Maryland Ave., S.W., Washington, DC 20202.

## B.3. *ຂ້ອຍສາມາດຂໍຄວາມຊ່ວຍເຫຼືອໄດ້ແນວໃດ ຖ້າຂ້ອຍຄິດວ່າໂຮງຮຽນໃດໜຶ່ງກຳລັງປະຕິບັດລະບຽບວິໄນໃນແບບທີ່ເລືອກປະຕິບັດ?*

ຖ້າທ່ານຄິດວ່າໂຮງຮຽນໃດໜຶ່ງກຳລັງປະຕິບັດວິໄນນັກຮຽນໃນແບບທີ່ເລືອກປະຕິບັດຕໍ່ກັບທ່ານ, ລູກຂອງທ່ານ ຫຼືຄົນອື່ນ, ທ່ານສາມາດຍື່ນການຮ້ອງຮຽນນຳ OCR ຫຼື CRTໄດ້. ການຮ້ອງຮຽນເລື່ອງການເລືອກປະຕິບັດສາມາດຖືກຍື່ນໄດ້ໂດຍບຸກຄົນໃດໜຶ່ງກໍ່ຕາມທີ່ເຊື່ອວ່າໂຮງຮຽນໃດໜຶ່ງທີ່ໄດ້ຮັບການຊ່ວຍເຫຼືອດ້ານການເງິນຈາກລັດຖະບານກາງໄດ້ເລືອກປະຕິບັດຕໍ່ກັບບຸກຄົນໃດໜຶ່ງບົນພື້ນຖານດ້ານເຊື້ອຊາດ, ສີຜິວ, ຊາດກຳເນີດ, ເພດ, ຄວາມພິການ ຫຼືອາຍຸ. ບຸກຄົນ ຫຼືອົງການທີ່ຍື່ນການຮ້ອງຮຽນບໍ່ຈຳເປັນຕ້ອງແມ່ນຜູ້ເຄາະຮ້າຍຂອງການເລືອກປະຕິບັດທີ່ຖືກກ່າວຫານັ້ນ, ແລະອາດຈະຮ້ອງຮຽນໃນນາມຕາງໜ້າໃຫ້ບຸກຄົນ ຫຼືກຸ່ມຄົນອື່ນໄດ້. ສຳລັບຂໍ້ມູນກ່ຽວກັບວິທີຍື່ນການຮ້ອງຮຽນນຳ OCR, ໃຫ້ເຂົ້າເບິ່ງ http://www2.ed.gov/about/offices/list/ocr/complaintintro.html ຫຼືຕິດຕໍ່ຫາທີມບໍລິການລູກຄ້າຂອງ OCR ໄດ້ທີ່ 1-800-421-3481. ສຳລັບຂໍ້ມູນກ່ຽວກັບວິທີຍື່ນການຮ້ອງຮຽນນຳພະແນກສິດທິມະນຸດຂອງ DOJ, ໃຫ້ເຂົ້າເບິ່ງ http://www.justice.gov/crt/complaint/ ຫຼືຕິດຕໍ່ຫາພະແນກສິດທິມະນຸດ, ຂະແໜງໂອກາດດ້ານການສຶກສາທີ່ເບີ 1-877-292-3804 ຫຼື education@usdoj.gov.

## B.4. *ຂ້ອຍແມ່ນຜູ້ໃຫ້ການສຶກສາ ຫຼືຜູ້ບໍລິຫານການສຶກສາ – ຂ້ອຍສາມາດຂໍອາການຊ່ວຍເຫຼືອດ້ານວິຊາການເພື່ອຊ່ວຍໂຮງຮຽນໃນເຂດການສຶກສາຂອງຂ້ອຍປັບປຸງບັນຍາກາດ ແລະການປະຕິບັດລະບຽບວິໄນໃນໂຮງຮຽນໄດ້ຢູ່ໃສ?*

ກະຊວງ ແລະສູນຊ່ວຍເຫຼືອດ້ານວິຊາການທີ່ກະຊວງໃຫ້ທຶນສາມາດໃຫ້ການຊ່ວຍເຫຼືອໂດຍກົງ ແລະສະເພາະແກ່ລັດ ແລະເຂດການສຶກສາ:

- ສູນຊ່ວຍເຫຼືອດ້ານວິຊາການກ່ຽວກັບການແຊກແຊງ ແລະການສະໜັບສະໜູນດ້ານພຶດຕິກຳທີ່ດີ ສາມາດໃຫ້ຂໍ້ມູນ, ເຄື່ອງມື ແລະຊັບພະຍາກອນແກ່ເຂດການສຶກສາ ແລະລັດ ເພື່ອກຳນົດ, ຈັດຕັ້ງປະຕິບັດ, ດັດປັບ ແລະຮັກສາການປະຕິບັດວິໄນໃນທົ່ວໂຮງຮຽນຢ່າງມີປະສິດທິຜົນ.

- ກະຊວງໃຫ້ທຶນແກ່ສູນຊ່ວຍເຫຼືອ ດ້ານຄວາມ ສະເໝີພາບ ທີ່ໃຫ້ການຝຶກອົບຮົມໂດຍກົງ ແລະການຊ່ວຍເຫຼືອດ້ານວິຊາການໃນຂົງເຂດຄວາມສະເໝີພາບດ້ານເຊື້ອຊາດ, ເພດ ແລະຊາດກຳເນີດຕາມການຮ້ອງຂໍຂອງເຂດການສຶກສາພາກລັດ ແລະໜ່ວຍງານລັດຖະບານອື່ນທີ່ຮັບຜິດຊອບ. ທາງສູນມັກຈະສ້າງບົດບັນທຶກຄວາມເຂົ້າໃຈກັບເຂດການສຶກສາທີ່ພວກເຂົາຮັບໃຊ້, ແລະໂດຍທົ່ວໄປ ໃຫ້ການບໍລິການແກ່ເຂດການສຶກສາເປັນໄລຍະຫົກເດືອນຫາໜຶ່ງປີ ຫຼືດົນກວ່ານັ້ນ.

- ກະຊວງໃຫ້ທຶນແກ່ ສູນສຳລັບ ຄູສອນແລະ ຜູ້ນຳທີ່ດີເລີດ ເພື່ອສະໜັບສະໜູນຄວາມພະຍາຍາມຂອງລັດໃນການພັດທະນາຜູ້ໃຫ້ການສຶກສາ ແລະຜູ້ນຳການສຶກສາທີ່ມີປະສິດທິຜົນ. ທາງສູນໃຫ້ການຊ່ວຍເຫຼືອດ້ານວິຊາການແກ່ລັດກ່ຽວກັບວິທີເຊື່ອມສານຄວາມສາມາດ ແລະທັກສະທີ່ກ່ຽວຂ້ອງກັບພຶດຕິກຳທີ່ດີຂອງນັກຮຽນ ແລະການມີສ່ວນຮ່ວມຂອງນັກຮຽນເຂົ້າໃນການພັດທະນາທາງວິຊາຊີບ, ການປະເມີນຜົນ ແລະຄວາມພະຍາຍາມຄຸ້ມຄອງກຳລັງແຮງງານອື່ນ.

ນອກນັ້ນ, OCR ຍັງໃຫ້ການຊ່ວຍເຫຼືອດ້ານວິຊາການເພື່ອຊ່ວຍເຂດການສຶກສາບັນລຸໄດ້ການປະຕິບັດຕາມແບບສະໝັກໃຈຕໍ່ກັບກົດໝາຍວ່າດ້ວຍສິດທິພົນລະເມືອງທີ່ມັນບັງຄັບໃຊ້ ແລະເຮັດວຽກກັບເຂດການສຶກສາເພື່ອພັດທະນາວິທີການປ້ອງກັນ ແລະແກ້ໄຂການເລືອກປະຕິບັດ. ເຂດການສຶກສາຄວນຕິດຕໍ່ຫາຫ້ອງການການບັງຄັບໃຊ້ຂອງ OCR ທີ່ຮັບໃຊ້ໃນເຂດການສຶກສານັ້ນເພື່ອຂໍການຊ່ວຍເຫຼືອດ້ານວິຊາການ. ສຳລັບຂໍ້ມູນຕິດຕໍ່, ກະລຸນາເບິ່ງເວັບໄຊທ໌ຂອງກະຊວງໄດ້ທີ່ http://wdcrobcolp01.ed.gov/CFAPPS/OCR/contactus.cfm.

## B.5. *ກະຊວງໃຫ້ການຊ່ວຍເຫຼືອດ້ານການເງິນເພື່ອປັບປຸງບັນຍາກາດ ແລະການປະຕິບັດວິໄນໃນໂຮງຮຽນແມ່ນບໍ?*

ແມ່ນ, ໃນຫຼາກຫຼາຍວິທີແຕກຕ່າງກັນ. ຫ້ອງການນັກຮຽນປອດໄພ ແລະສຸຂະພາບດີ ເປັນຜູ້ບໍລິຫານບັນດາໂຄງການທຶນຊ່ວຍເຫຼືອລ້າທີ່ມີຈຸດປະສົງປັບປຸງບັນຍາກາດໃນໂຮງຮຽນ (ລວມທັງການປະຕິບັດວິໄນໃນໂຮງຮຽນ), ໂດຍຂຶ້ນກັບການມີຢູ່ຂອງທຶນ. ຜູ້ທີ່ສົນໃຈໃນການຮຽນຮູ້ເພີ່ມເຕີມກ່ຽວກັບ

ໂອກາດໄດ້ຮັບທຶນຊ່ວຍເຫຼືອລ້າດັ່ງກ່າວ ຄວນເຂົ້າເບິ່ງ ການປະກາດໂອກາດການໃຫ້ທຶນ ຂອງກະຊວງ ຫຼືສົ່ງການສອບຖາມຫາ OESE@ed.gov.  ເພາະວ່າສະພາບແວດລ້ອມການຮຽນທີ່ປອດໄພ ແລະມີການສະໜັບສະໜູນແມ່ນອົງປະກອບທີ່ສໍາຄັນຂອງການປະຕິຮູບໂຮງຮຽນ, ທາງກະຊວງໄດ້ດໍາເນີນຂັ້ນຕອນທີ່ເຂັ້ມງວດເພື່ອສົ່ງເສີມ, ແລະໃນບາງກໍລະນີ ຮຽກຮ້ອງໃຫ້ຜູ້ໄດ້ຮັບລາຍເຊັນຂອງພວກເຮົາປະຕິຮູບຄວາມພະຍາຍາມ – ເຊິ່ງລວມທັງການແຂ່ງຂັນເປັນທີໜຶ່ງ ແລະເງິນຊ່ວຍເຫຼືອເພື່ອປັບປຸງໂຮງຮຽນ (SIG) – ເຂົ້າຮ່ວມໃນກິດຈະກໍາຕ່າງໆເພື່ອປັບປຸງບັນຍາກາດ ແລະການປະຕິບັດວິໄນໃນໂຮງຮຽນ.

ໃນການແຂ່ງຂັນເປັນທີໜຶ່ງປະຈໍາປີ 2012 – ການແຂ່ງຂັນຂອງເຂດການສຶກສາ, ເຊິ່ງເປັນການລົງທຶນ $400 ລ້ານເພື່ອຊ່ວຍເຂດການສຶກສາຈັດຕັ້ງປະຕິບັດການປະຕິຮູບການສຶກສາຄົບວົງຈອນ, ກະຊວງໄດ້ມອບທຶນຊ່ວຍເຫຼືອລ້າໃຫ້ແກ່ບັນດາເຂດການສຶກສາທີ່ມີນັກຮຽນຜິວສີ ຫຼືນັກຮຽນທີ່ພິການຈໍານວນຫຼາຍເກີນໄປໃນອັດຕາການປະຕິບັດວິໄນຂອງເຂດການສຶກສາ ໂດຍມີເງື່ອນໄຂວ່າເຂດການສຶກສາຕ້ອງດໍາເນີນການວິເຄາະສາເຫດຮາກເຫງົ້າ ແລະພັດທະນາແຜນການເພື່ອແກ້ໄຂສາເຫດຮາກເຫງົ້ານັ້ນ.  ນອກນັ້ນ, ການແຂ່ງຂັນຍັງລວມເອົາໜຶ່ງບູລິມະສິດທີ່ແຂ່ງຂັນກັນຄື:  ຜູ້ສະໝັກຂໍທຶນຖືກຮ້ອງຂໍໃຫ້ສະແດງໃຫ້ເຫັນວ່າພວກເຂ ົາຈະລວມເອົາຊັບພະຍາກອນພາກລັດ ແລະ/ຫຼືພາກເອກະຊົນເຂົ້າກັນເພື່ອເພີ່ມຄວາມສາມາດຂອງໂຮງຮຽນໃນການໃຫ້ການສະໜັບສະໜູນນັກຮຽນ ແລະຄອບຄົວທີ່ແກ້ໄຂຄວາມຕ້ອງການດ້ານສັງຄົມ, ອາລົມ ແລະພຶດຕິກໍາຂອງປະຊາກອນທີ່ມີຄວາມສ່ຽງຫຼາຍທີ່ສຸດແນວໃດ.  ຂໍ້ກໍານົດ ແລະສິ່ງຈູງໃຈເຫຼົ່ານີ້ຖືກສືບຕໍ່ໃນການແຂ່ງຂັນເປັນທີໜຶ່ງໃນປີ 2013 – ການແຂ່ງຂອງເຂດການສຶກສາ.  ເບິ່ງການແຂ່ງຂັນເປັນທີໜຶ່ງສົກປີ 2013  –ຄໍາຮ້ອງສະໝັກຂໍທຶນຂອງເຂດການສຶກສາ ສໍາລັບຂໍ້ມູນເພີ່ມເຕີມ.

SIG ສົ່ງເສີມໃຫ້ບັນດາໂຮງຮຽນດໍາເນີນການເພື່ອປັບປຸງບັນຍາກາດ ແລະລະບຽບວິໄນໃນໂຮງຮຽນ ເຊັ່ນວ່າຜ່ານການຈັດຕັ້ງປະຕິບັດລະບົບການສະໜັບສະໜູນພຶດຕິກໍາທີ່ດີ.  ໂຮງຮຽນສາມາດໃຊ້ທຶນ SIG ສໍາລັບກິດຈະກໍາເຫຼົ່ານີ້.  ໂຮງຮຽນທີ່ຈັດຕັ້ງປະຕິບັດຕົວແບບ "ການປ່ຽນແປງ"   ຖືກກໍານົດໃຫ້ສະໜອງການສະໜັບສະໜູນດ້ານສັງຄົມ, ອາລົມ ແລະພຶດຕິກໍາແກ່ນັກຮຽນ – ເຊິ່ງເປັນປະໂຫຍດອັນໃຫຍ່ຫຼວງຕໍ່ກັບໂຮງຮຽນທີ່ພະຍາຍາມຫຼຸດຜ່ອນການໃຊ້ການໂຈະການຮຽນ ແລະການໄລ່ອອກໂຮງຮຽນຂອງເຂົາເຈົ້າ.  ເບິ່ງເວັບໄຊທ໌ທຶນຊ່ວຍເຫຼືອລ້າ ເພື່ອການປັບປຸງໂຮງຮຽນ ສໍາລັບຂໍ້ມູນເພີ່ມເຕີມ.

ບັນດາລັດທີ່ໄດ້ຮັບຄວາມຍືດຍຸ່ນຕາມກົດໝາຍການສຶກສາຂັ້ນປະຖົມ ແລະມັດທະຍົມ (ESEA) ບໍ່ໄດ້ຮັບການໃຫ້ທຶນເພີ່ມເຕີມ.  ແນວໃດກໍ່ຕາມ, ຄວາມຍືດຍູ່ນ ESEA ຮຽກຮ້ອງໃຫ້ໂຮງຮຽນບູລິມະສິດແກ້ໄຂບັນຍາກາດໃນໂຮງຮຽນ ລວມທັງຄວາມປອດໄພ ແລະລະບຽບວິໄນ ເປັນສ່ວນໜຶ່ງຂອງຫຼັກການປ່ຽນແປງ.  ໂດຍສະເພາະແລ້ວ, ພວກເຂົາຕ້ອງສ້າງສະພາບແວດລ້ອມໂຮງຮຽນທີ່ປັບປຸງຄວາມປອດໄພ ແລະລະບຽບວິໄນໃນໂຮງຮຽນໃຫ້ດີຂຶ້ນ, ແລະແກ້ໄຂປັດໃຈອື່ນທີ່ບໍ່ແມ່ນການຮຽນທີ່ມີຜົນຕໍ່ກັບຄວາມສໍາເລັດຂອງນັກຮຽນ ເຊັ່ນວ່າ ຄວາມຕ້ອງການດ້ານສັງຄົມ, ອາລົມ ແລະສຸຂະພາບຂອງນັກຮຽນ.  ເບິ່ງຄໍາຖາມທີ່ມັກຖາມກ່ຽວກັບຄວາມຍືດຍຸ່ນ ESEA  ສໍາລັບຂໍ້ມູນເພີ່ມເຕີມ.

## C. <u>ຜົນສະທ້ອນສໍາລັບສະມາຊິກປະຊາຄົມໂຮງຮຽນ</u>

### C.1. *ຂ້ອຍແມ່ນຜູ້ໃຫ້ການສຶກສາ – ຊຸດຄໍາແນະນໍາເລື່ອງລະບຽບວິໄນໃນໂຮງຮຽນໝາຍເຖິງຫຍັງສໍາລັບຂ້ອຍ?*

ຊຸດຄໍາແນະນໍານີ້ຖືກອອກແບບມາໂດຍການຮັບຮູ້ວ່າ ຜູ້ໃຫ້ການສຶກສາບໍ່ສາມາດສ້າງບັນຍາກາດໂຮງຮຽນທີ່ດີໄດ້ໂດຍບໍ່ມີການຝຶກອົບຮົມ ແລະການສະໜັບສະໜູນ, ສະນັ້ນ ມັນຈຶ່ງພະຍາຍາມສະໜັບສະໜູນຄວາມພະຍາຍາມຂອງທ່ານໃນການສ້າງບັນຍາກາດໃນໂຮງຮຽນທີ່ດີ ແລະປະຕິບັດວິໄນນັກຮຽນໃນແບບທີ່ຍຸຕິທໍາ, ເທົ່າທຽມກັນ, ຊ່ວຍນັກຮຽນຮຽນຮູ້ ແລະປັບປຸງພຶດຕິກໍາຂອງເຂົາເຈົ້າ.

<u>ຈົດໝາຍສະບາຍດີເພື່ອນຮ່ວມງານ</u> ທີ່ລວມມີໃນຊຸດຄໍາແນະນໍາເລື່ອງລະບຽບວິໄນໃນໂຮງຮຽນ ອະທິບາຍພັນທະຂອງທ່ານພາຍໃຕ້ກົດໝາຍວ່າດ້ວຍສິດທິພົນລະເມືອງຂອງລັດຖະບານກາງ ໃນການບໍລິຫານລະບຽບວິໄນຂອງນັກຮຽນໂດຍບໍ່ມີການເລືອກປະຕິບັດບົນພື້ນຖານດ້ານເຊື້ອຊາດ, ສີຜິວ ຫຼືຊາດກໍາເນີດ. <u>ຫຼັກການນໍາທາງ</u> ໃນຊຸດຄໍາແນະນໍາເລື່ອງລະບຽບວິໄນໃນໂຮງຮຽນ ກໍານົດບັນດາຫຼັກການ ແລະຂັ້ນຕອນດໍາເນີນການທີ່ກ່ຽວຂ້ອງ ເພື່ອຊ່ວຍທ່ານ ແລະກຸ່ມໂຮງຮຽນຂອງທ່ານປັບປຸງບັນຍາກາດໃນໂຮງຮຽນ, ຮັບປະກັນໃຫ້ມີຜົນຮັບທີ່ກົງກັນ ແລະເໝາະສົມເພື່ອແກ້ໄຂການປະພຶດຜິດ, ຈັດຕັ້ງປະຕິບັດທາງເລືອກທີ່ມີປະສິດທິຜົນຕໍ່ກັບການໂຈະການຮຽນ ແລະການໄລ່ອອກໂຮງຮຽນ, ແລະຫຼຸດຜ່ອນການບໍ່ສົມສ່ວນໃນການປະຕິບັດວິໄນ. <u>ຫຼັກການນໍາທາງ</u> ຕາມມາດ້ວຍ <u>ປື້ມລາຍຊື່</u> ເຊິ່ງໃຫ້ຂໍ້ມູນກ່ຽວກັບຄໍາແນະນໍາຂອງລັດຖະບານກາງ, ສູນຊ່ວຍເຫຼືອດ້ານວິຊາການ, ລາຍງານຫຍໍ້, ໂມດູນການຝຶກອົບຮົມ, ແລະແຫຼ່ງຄວາມຊ່ວຍເຫຼືອອື່ນທີ່ມີໃຫ້ເພື່ອຊ່ວຍເຫຼືອຊຸມຊົນຂອງທ່ານໃນເລື່ອງການວາງແຜນ ແລະການຈັດຕັ້ງປະຕິບັດແຕ່ລະ<u>ຫຼັກການນໍາທາງ</u>. ຕົວຢ່າງ, <u>ປື້ມລາຍຊື່</u> ບອກຫຼັກສູດລະບຽບວິໄນໃນໂຮງຮຽນທີ່ດີສໍາລັບຫົວໜ້າໂຮງຮຽນ (ຫຼັກສູດອອນລາຍ, ແບບໂຕ້ຕອບເພື່ອຝຶກອົບຮົມຜູ້ອໍານວຍການ ແລະທີມງານບັນຍາກາດໂຮງຮຽນ) ແລະສ້າງສະພາບແວດລ້ອມທີ່ປອດໄພ ແລະເຄົາລົບນັບຖືໃນຫ້ອງຮຽນຂອງປະເທດຂອງພວກເຮົາ (ພາກຝຶກອົບຮົມຕ້ານການຂົ່ມເຫັງ) ໃນນາມເປັນແຫຼ່ງຄວາມຊ່ວຍເຫຼືອຕົ້ນຕໍສໍາລັບການສ້າງບັນຍາກາດໂຮງຮຽນທີ່ດີ ແລະເນັ້ນໜັກໃສ່ການປ້ອງກັນ.

### C.2. *ຂ້ອຍແມ່ນນັກຮຽນ ຫຼືພໍ່ແມ່ຂອງນັກຮຽນ – ຊຸດຄໍາແນະນໍາເລື່ອງລະບຽບວິໄນໃນໂຮງຮຽນໝາຍເຖິງຫຍັງສໍາລັບຂ້ອຍ?*

ນັກຮຽນ ແລະພໍ່ແມ່ນັກຮຽນຄວນຮູ້ສຶກວ່າໄດ້ຮັບອໍານາດໃນການເຮັດວຽກກັບໂຮງຮຽນ ແລະເຂດການສຶກສາເພື່ອຊ່ວຍສ້າງໂຮງຮຽນທີ່ປອດໄພ ແລະມີການສະໜັບສະໜູນສໍາລັບນັກຮຽນ. ຊຸດຄໍາແນະນໍາເລື່ອງລະບຽບວິໄນໃນໂຮງຮຽນໃຫ້ຂໍ້ມູນເພື່ອຊ່ວຍໃຫ້ນັກຮຽນ ແລະພໍ່ແມ່ນັກຮຽນເຂົ້າໃຈພັນທະທາງກົດໝາຍທີ່ໂຮງຮຽນມີໃນການບໍລິຫານລະບຽບວິໄນຂອງນັກຮຽນ, ແລະຊັບພະຍາກອນທີ່ມີໃຫ້ແກ່ຊຸມຊົນຂອງເຂົາເຈົ້າເມື່ອຕອບສະໜອງບໍ່ໄດ້ພັນທະເຫຼົ່ານີ້ ຫຼືເມື່ອສົ່ງເສີມສະໜັບສະໜູນການປະຕິຮູບ.

<u>ຈົດໝາຍສະບາຍດີເພື່ອນຮ່ວມງານ</u> ທີ່ລວມມີໃນຊຸດຄໍາແນະນໍາເລື່ອງລະບຽບວິໄນໃນໂຮງຮຽນ ອະທິບາຍກົດໝາຍວ່າດ້ວຍສິດທິພົນລະເມືອງຂອງລັດຖະບານກາງທີ່ຮັບປະກັນສິດທິຂອງນັກຮຽນໃນການພົ້ນຈາກ

ການປະຕິບັດວິໄນທີ່ເລືອກປະຕິບັດບົນພື້ນຖານດ້ານເຊື້ອຊາດ, ສີຜິວ ຫຼືຊາດກຳເນີດ. ປື້ມລາຍຊື່ ຍັງໃຫ້ຂໍ້ມູນແກ່ພໍ່ແມ່ ແລະນັກຮຽນກ່ຽວກັບວິທີປັບປຸງບັນຍາກາດໂຮງຮຽນ ແລະສົ່ງເສີມສະໜັບສະໜູນໃນນາມນັກຮຽນ. ຕົວຢ່າງ, ປື້ມລາຍຊື່ ບອກຊຸດຂໍ້ມູນດ້ານສິດທິພົນລະເມືອງ ເຊິ່ງຊຸມຊົນສາມາດໃຊ້ເພື່ອລະບຸໂຮງຮຽນ ແລະເຂດການສຶກສາທີ່ມີອັດຕາການປະຕິບັດວິໄນທີ່ບໍ່ສົມສ່ວນ, ແລະສາມຂັ້ນຕອນຊັດເຈນສຳລັບການປ່ຽນແປງຂອງຊຸມຊົນໂຮງຮຽນ: ຊຸດເຄື່ອງມືສຳລັບຫົວໜ້າຊຸມຊົນ ເຊິ່ງໃຫ້ກອບວຽກເພື່ອໃຫ້ສິດອຳນາດແກ່ພໍ່ແມ່ ແລະພາກສ່ວນອື່ນໃນຊຸມຊົນໃນການຈັດຕັ້ງຄວາມພະຍາຍາມປະຕິຮູບ. ປື້ມລາຍຊື່ ຍັງໃຫ້ຊຸດຂໍ້ຕົກລົງລະຫວ່າງໂຮງຮຽນ, ເຂດການສຶກສາ ແລະໜ່ວຍງານລັດຖະບານກາງ ເພື່ອແກ້ໄຂການຮ້ອງຮຽນເລື່ອງການບໍ່ສົມສ່ວນໃນການປະຕິບັດວິໄນ. ຂໍ້ຕົກລົງດັ່ງກ່າວເຮັດໜ້າທີ່ເປັນຕົວແບບທີ່ນັກຮຽນ ແລະພໍ່ແມ່ສາມາດໃຊ້ ໃນເວລາສົ່ງເສີມສະໜັບສະໜູນການປ່ຽນແປງໃນຊຸມຊົນຂອງເຂົາເຈົ້າເອງ. ສຸດທ້າຍ, ບົດຄັດຫຍໍ້ ສາມາດຊ່ວຍທ່ານເຂົ້າໃຈກົດເກນ ແລະກົດລະບຽບຂອງລັດໃນລັດຂອງທ່ານທີ່ກ່ຽວຂ້ອງກັບລະບຽບວິໄນໃນໂຮງຮຽນ, ແລະອະນຸຍາດໃຫ້ທ່ານປຽບທຽບກົດການຂອງລັດດັ່ງກ່າວກັບລັດອື່ນ.

### C.3. *ຂ້ອຍແມ່ນຜູ້ບໍລິຫານການສຶກສາ ຫຼືຜູ້ສ້າງນະໂຍບາຍ – ຊຸດຄຳແນະນຳເລື່ອງລະບຽບວິໄນໃນໂຮງຮຽນໝາຍເຖິງຫຍັງສຳລັບຂ້ອຍ?*

ຈົດໝາຍສະບາຍດີເພື່ອນຮ່ວມງານ ທີ່ລວມມີໃນຊຸດຄຳແນະນຳເລື່ອງລະບຽບວິໄນໃນໂຮງຮຽນ ອະທິບາຍພັນທະທາງກົດໝາຍຂອງໂຮງຮຽນພາຍໃຕ້ກົດໝາຍວ່າດ້ວຍສິດທິພົນລະເມືອງຂອງລັດຖະບານກາງ ໃນການບໍລິຫານລະບຽບວິໄນຂອງນັກຮຽນໂດຍບໍ່ມີການເລືອກປະຕິບັດບົນພື້ນຖານດ້ານເຊື້ອຊາດ, ສີຜິວ ຫຼືຊາດກຳເນີດ. ຜູ້ບໍລິຫານການສຶກສາຄວນເຂົ້າໃຈພັນທະຂອງເຂົາເຈົ້າ ແລະຄຳນຶງເຖິງພວກມັນໃນເວລາແກ້ໄຂ, ພັດທະນາ ແລະ/ຫຼືຈັດຕັ້ງປະຕິບັດນະໂຍບາຍ ແລະລະບຽບຂັ້ນຕອນດ້ານວິໄນໃນໂຮງຮຽນ. ຫຼັກການນຳທາງ ໃນຊຸດຄຳແນະນຳເລື່ອງລະບຽບວິໄນໃນໂຮງຮຽນ ໃຫ້ຂັ້ນຕອນດຳເນີນການເພື່ອແຈ້ງບອກທ່ານກ່ຽວກັບຄວາມພະຍາຍາມທີ່ໂຮງຮຽນຄວນເຮັດເພື່ອປັບປຸງບັນຍາກາດໃນໂຮງຮຽນ, ຈັດຕັ້ງປະຕິບັດທາງເລືອກທີ່ມີປະສິດທິຜົນຕໍ່ກັບການໂຈະການຮຽນ ແລະການໄລ່ອອກໂຮງຮຽນ, ແລະຫຼຸດຜ່ອນຄວາມບໍ່ສົມສ່ວນໃນການປະຕິບັດວິໄນ. ຫຼັກການນຳທາງ ຍັງລະບຸການຄົ້ນຄວ້າວິໄຈ ແລະເອກະສານຄຳແນະນຳຂອງລັດຖະບານກາງທີ່ກ່ຽວຂ້ອງກັບບັນຍາກາດໃນໂຮງຮຽນ ແລະລະບຽບວິໄນໃນໂຮງຮຽນ, ເພື່ອຊ່ວຍທ່ານຮຽນຮູ້ເພີ່ມເຕີມກ່ຽວກັບຫົວຂໍ້ເຫຼົ່ານີ້. ບົດຄັດຫຍໍ້ ສາມາດຊ່ວຍຜູ້ສ້າງນະໂຍບາຍ ແລະເຈົ້າໜ້າທີ່ດ້ານການສຶກສາ ລະບຸກົດເກນດ້ານລະບຽບວິໄນໃນໂຮງຮຽນທີ່ນຳໃຊ້ໃນລັດຂອງເຂົາເຈົ້າ ແລະປຽບທຽບກົດເກນ ແລະກົດລະບຽບທີ່ມີຜົນຕໍ່ກັບລະບຽບວິໄນໃນໂຮງຮຽນຢູ່ໃນແຕ່ລະລັດ ແລະເຂດອຳນາດ. ສຸດທ້າຍ, ພວກເຮົາໄດ້ສະໜອງ ສະພາບລວມກ່ຽວກັບແຜນການລິເລີ່ມດ້ານລະບຽບວິໄນໃນໂຮງຮຽນທີ່ມີການສະໜັບສະໜູນ ເຊິ່ງອະທິບາຍຄວາມພະຍາຍາມຂອງລັດຖະບານກາງທີ່ກຳລັງດຳເນີນຢູ່ ແລະເຮັດສຳເລັດແລ້ວໃນການແກ້ໄຂບັນຫາກ່ຽວກັບບັນຍາກາດໃນໂຮງຮຽນ ແລະລະບຽບວິໄນໃນໂຮງຮຽນ.